ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສຳນັກງານ ຄຄຊ
ເລກທີ 0074
ວັນທີ 26 JAN 2016
ໂທລະສັບ 021 217770

ເລກທີ: 04 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 25 ມັງກອນ 2016

## ລາຍງານການເຄື່ອນໄຫວປະຈຳອາທິດ ທີ 04/01/2016 ຫາ 08/01/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ ຂອງທະນາຄານແຫ່ງ ສປປ ລາວ

I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

II. ວຽກງານວິຊາສະເພາະ

1. ສະພາບເສດຖະກິດເງິນຕາສາກົນ

1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີ ຍ້ອນຕົວເລກທາງດ້ານເສດຖະກິດຂອງ ສ.ອາເມລິກາ ອອກມາດີ ເປັນຕົ້ນແມ່ນດັດຊະນີຄວາມເຊື່ອໝັ້ນຂອງຜູ້ບໍລິໂພກເພີ່ມຂຶ້ນເປັນ 96,5 ໃນເດືອນ 12/2015 ຈາກ 92,6 ໃນເດືອນຜ່ານມາ. ສ່ວນເງິນເຢນແຂງຄ່າຂຶ້ນເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນຕົວເລກຜົນຜະລິດອຸດສາຫະກຳຂອງຍີ່ປຸ່ນເພີ່ມຂຶ້ນ 1,6% ໃນເດືອນ 11/2015 ຈາກ 1,4% ໃນເດືອນ 11/2014.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 29/12/2015 | ອາທິດນີ້ 05/01/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,0976 | 1,0812 | 0,51% |
| ໂດລາ/ເຢນ | 120,33 | 119,35 | 1,62% |
| ໂດລາ/ບາດ | 36,10 | 36,11 | 0,04% |
| ໂດລາ/ເປໂຊ | 47,10 | 47,00 | 0,61% |
| ໂດລາ/ຣູປີ | 13.694,44 | 13.855,78 | -0,46% |
| ໂດລາ/ໂດລາສິງກະໂປ | 1,4096 | 1,4239 | -0,88% |
| ໂດລາ/ຢວນ | 6,4853 | 6,5213 | -0,64% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 6,52% ຈາກ 35,76 ໂດລາ/ບາເຣວ ມາເປັນ 38,09 ໂດລາ/ບາເຣວ ຍ້ອນນັກລົງທຶນບໍ່ໝັ້ນໃຈຕໍ່ການສະໜອງນ້ຳມັນ ພາຍຫຼັງຄວາມຂັດແຍ່ງລະຫວ່າງຊາອຸດິອາລາເບຍ ແລະ ອີຣ່ານ ມີຄວາມຮຸນແຮງຂຶ້ນ.

ລາຄາຄຳໃນຕະຫຼາດໂລກເພີ່ມຂຶ້ນ 0,78% ຈາກ 1.068,77 ໂດລາ/ອອນ ມາເປັນ 1.077,06 ໂດລາ/ອອນ ຍ້ອນນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກງກຳໄລ ແລະ ປ້ອງກັນຄວາມສ່ຽງ ຈາກຄວາມຜັນຜວນຂອງຕະຫຼາດໂລກ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,12% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 0,15% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,01% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 0,21% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,89% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 1,12% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 8,99% ສຳລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 10,22% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 29/12/2015 | | | ອາທິດນີ້ 05/01/2015 | | | % (+) ເງິນກີບແຂງ/(-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8,134,27 | 8,163,45 | 8,141,32 | 8,145,05 | 8,174,64 | 8,150,97 | -0,13% | -0,14% | -0,12% |
| ບາດ | 225,93 | 227,57 | 227,30 | 226,29 | 227,53 | 227,32 | -0,16% | 0,02% | -0,01% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8,149,13 | 8,232,00 | 8,190,57 | 8,163,18 | 8,242,87 | 8,203,03 | -0,17% | -0,13% | -0,15% |
| ບາດ | 227,31 | 228,27 | 227,79 | 227,77 | 228,76 | 228,26 | -0,20% | -0,22% | -0,21% |
| ຜິດດ່ຽງອັດຕາ ທຫກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,18% | 0,84% | 0,60% | 0,22% | 0,83% | 0,64% | | | |
| ບາດ | 0,61% | 0,30% | 0,22% | 0,65% | 0,54% | 0,41% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ເພີ່ມຂຶ້ນ 0,61% ທຽບໃສ່ວັນທີ 01/01/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 23,74%;
- ປະລິມານເງິນ M2 ຫຼຸດລົງ 0,98% ເມື່ອທຽບໃສ່ວັນທີ 01/01/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 13,82%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 28/12/2015) ເຫັນວ່າ ທຫກ ຊື້ໂດລາສຸດທິ 0,38 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 50,85 ລ້ານໂດລາ ແລະ ຂາຍໂດລາໄດ້ 50,47 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 316,87 ລ້ານບາດ (ໃນນີ້ ຊື້ບາດໄດ້ 329,53 ລ້ານບາດ ແລະ ຂາຍບາດໄດ້ 646,40 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 24,20% ແລະ ຫຼຸດລົງ 66,64% ສຳລັບເງິນບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທຫກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 4,60 ລ້ານໂດລາ ແລະ ເງິນບາດມີຈຳນວນ 91,50 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 25,23 ລ້ານໂດລາ ແລະ ຊື້ບາດສຸດທິ ຈຳນວນ 15,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈຳນວນ 110,55 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈຳນວນ 4.305,32 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 29/12/2015 | | ອາທິດທີ 05/01/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 15,91 | 135,56 | 21,77 | 134,20 | 36,82% | -1,00% |
| - ທ/ຄທຸລະກິດອື່ນໆ | 65,66 | 218,12 | 29,08 | 195,33 | -55,71% | -10,45% |
| ລວມຊື້: | **81,57** | **353,68** | **50,85** | **329,53** | **-37,67%** | **-6,83%** |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 20,80 | 203,27 | 21,55 | 137,16 | 3,62% | -32,52% |
| - ທ/ຄທຸລະກິດອື່ນໆ | 31,28 | 2.368,20 | 28,91 | 509,24 | -7,57% | -78,50% |
| ລວມຂາຍ: | **52,08** | **2.571,47** | **50,47** | **646,40** | **-3,10%** | **-74,86%** |
| ຊື້-ຂາຍສຸດທິ ທທກ | **29,48** | **-2.217,79** | **0,38** | **-316,87** | **-98,72%** | **-85,71%** |
| ຜິດດ່ຽງ ຊື້-ຂາຍ | 36,15 | -627,06 | 0,74 | -96,16 | -354,63% | 530,01% |
| ມູນຄ່າການຊື້-ຂາຍ | **133,65** | **2.925,15** | **101,31** | **975,93** | **-24,20%** | **-66,64%** |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 37,00 | 15,00 | 0,00 | 15,00 | | |
| - ທຫລ ຂາຍໃຫ້ ທທກ | 43,41 | 0,00 | 25,23 | 0,00 | | |
| ຊື້-ຂາຍສຸດທິ ທຫລ | **-6,41** | **15,00** | **-25,23** | **15,00** | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **4,54** | **73,74** | **4,60** | **91,50** | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 197,35 | 5.547,46 | 0,28 | 4.305,32 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 147,46 | 360,60 | 110,83 | 0,00 | | |
| ຊື້-ຂາຍສຸດທິ ທຫລ | **49,90** | **5.186,86** | **-110,55** | **4.305,32** | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 12/2015 ຢູ່ໃນລະດັບ 0,90% ຫຼຸດລົງຈາກ 1,27% ໃນເດືອນ 11/2015. ສາເຫດຍ້ອນດັດຊະນີລາຄາສິນຄ້າຕົ້ນຕໍແມ່ນເພີ່ມຂຶ້ນຢູ່ໃນລະດັບຕ່ຳ ເປັນຕົ້ນແມ່ນລາຄາສິນຄ້າໝວດອາຫານ ແລະ ເຄື່ອງດື່ມ (ທີ່ບໍ່ແມ່ນເຫຼົ້າ) ຫຼຸດລົງຢູ່ໃນລະດັບ 4,92%; ໝວດຄົມມະນາຄົມ ແລະ ການຂົນສົ່ງສືບຕໍ່ຫຼຸດລົງໃນລະດັບ -7,93%[2] ເນື່ອງຈາກການປັບຫຼຸດລົງ

[2] ລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ໃນເດືອນທັນວາປັບຫຼຸດລົງ2ຄັ້ງຕິດຕໍ່ກັນຄື: ວັນທີ07/12/2015 ແລະວັນທີ22/11/2015.

ຂອງລາຄານ້ຳມັນເຊື້ອໄຟ (ສະເລ່ຍ -26,17%). ສຳລັບອັດຕາເງິນເຟີ້ໃນປີ 2015 ຢູ່ໃນລະດັບ 1,28% ຫຼຸດລົງຈາກ 4,13% ໃນປີຜ່ານມາ. ສາເຫດຫຼັກຕົ້ນຕໍທີ່ພາໃຫ້ເງິນເຟີ້ໃນປີ 2015 ຫຼຸດລົງ ແມ່ນຍ້ອນລາຄາຂາຍຍ່ອຍນ້ຳມັນເຊື້ອໄຟທີ່ຫຼຸດລົງຢ່າງຕໍ່ເນື່ອງ, ສ່ວນດັດຊະນີລາຄາໝວດອາຫານ ແລະ ເຄື່ອງດື່ມກໍ່ມີການເໜັງຕີງໃນເກນປົກກະຕິ.

2.5 <u>ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ</u>

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 55,1 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງຫຼຸດລົງ 88,2% ທຽບໃສ່ອາທິດຜ່ານມາ.

2.6 <u>ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ</u>

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 366 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 66,67% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 233,79 ຕື້ກີບ ຫຼຸດລົງ 73,99% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (01-07/01/2016) ມີຈຳນວນ 1.680 ຄັ້ງ ໂດຍມີມູນຄ່າ 397,26 ຕື້ກີບ ຫຼຸດລົງ 31,73% ຊຶ່ງທະນາຄານພັດທະນາລາວ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 449 ຄັ້ງ.

2.7 <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ປິດຢູ່ທີ່ 1.171,94 ຈຸດຫຼຸດລົງ 0,14% ເມື່ອທຽບໃສ່ອາທິດຜ່ານມາ. ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 105.092 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 380,64 ລ້ານກີບ ຫຼຸດລົງ 20,44% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 33.18% ຂອງມູນຄ່າການຊື້-ຂາຍທັງໝົດ ແລະໄດ້ສັງເກດເຫັນວ່າ ລາຄາຮຸ້ນຂອງ PTLໄດ້ຫຼຸດລົງ ເນື່ອງຈາກຜູ້ລົງທຶນພາຍໃນໄດ້ສົ່ງຄຳສັ່ງຂາຍໃນລາຄາທີ່ຕ່ຳ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ(BCEL)ມີລາຄາຊື້-ຂາຍສະເລ່ຍ 4.916 ກີບ/ຮຸ້ນ ຫຼຸດລົງ 2 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 10.176 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 50ລ້ານກີບ ເພີ່ມຂຶ້ນ 19,31% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 42.32% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່9,75%[3].

ຮຸ້ນຂອງບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ(EDL-Gen)ມີລາຄາຊື້-ຂາຍສະເລ່ຍ 5.859 ກີບ/ຮຸ້ນ ເພີ່ມຂຶ້ນ 262 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 5.247 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 30,74 ລ້ານກີບ ຫຼຸດລົງ 92,31% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 25.09% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ13,83%[4].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ອາທິດນີ້ບໍ່ມີລາຄາຊື້-ຂາຍສະເລ່ຍເນື່ອງຈາກບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[5].

ຮຸ້ນຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ(PTL)ມີລາຄາຊື້-ຂາຍສະເລ່ຍ 2.600 ກີບ/ຮຸ້ນ ຫຼຸດລົງ 342 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 13 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,03 ລ້ານກີບ ຫຼຸດລົງ 99,91%. ໂດຍອາທິດນີ້ບໍ່ມີການສົ່ງຄຳສັ່ງຊື້-ຂາຍຈາກຜູ້ລົງທຶນຕ່າງປະເທດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,68%[6].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN)ມີລາຄາຊື້-ຂາຍສະເລ່ຍ 3.344 ກີບ/ຮຸ້ນ ເພີ່ມຂຶ້ນ 44 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 89.656 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 299,8 ລ້ານກີບ ເພີ່ມ

[3]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[4]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%;

[5]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[6]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

ຂຶ້ນ 90.760%. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,10%[7].

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ສຳເລັດການເຂົ້າຮ່ວມກອງປະຊຸມ ແລະ ສຳມະນາ: ❶ກອງປະຊຸມລະດົມຄວາມຄິດເຫັນ ຕໍ່ຮ່າງລະບຽບວ່າດ້ວຍການສະໜອງຂໍ້ມູນກ່ຽວກັບແຫຼ່ງທຶນຈົດທະບຽນ, ໂຄງສ້າງຜູ້ຖືຮຸ້ນ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ຂອງບໍລິສັດຫຼັກຊັບ ທີ່ ສຳນັກງານ ຄຄຊ, ❷ກອງປະຊຸມເພື່ອຜ່ານດຳລັດວ່າດ້ວຍການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ ທີ່ ທຫລ, ❸ສຳເລັດການເຂົ້າຮ່ວມປັບປຸງລະບຽບພາຍໃນ ແລະ ຂໍ້ກຳນົດ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດເຂດປາກທອນ ທີ່ແຂວງບໍລິຄຳໄຊ;
- ສຳເລັດການລາຍງານກ່ຽວກັບ ຜົນຂອງການມາເຮັດວຽກຢູ່ ສປປ ລາວ ຂອງຄະນະຜູ້ແທນກຸ່ມອາຊີປາຊີຟິກ ເພື່ອຕ້ານການຟອກເງິນ ໃຫ້ກັບຄະນະກຳມະທິການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ສະໜອງເງິນແກ່ການກໍ່ການຮ້າຍ (ຄຕຟງ);
- ສຳເລັດການຈັດກອງປະຊຸມຄົ້ນຄວ້າຮ່າງຄຳສັ່ງຂອງ ນາຍົກລັດຖະມົນຕີ ວ່າດ້ວຍ ການຍຶດ, ອາຍັດ ທຶນທີ່ພົວພັນກັບການຟອກເງິນ ຮ່ວມກັບກະຊວງປ້ອງກັນຄວາມສະຫງົບ, ກະຊວງຍຸຕິທຳ, ອົງການໄອຍະການ, ສານປະຊາຊົນສູງສຸດ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ທີ່ ທຫລ;

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ສືບຕໍ່ຄົ້ນຄວ້າ: ❶ຄົ້ນຄວ້າລະບຽບກ່ຽວກັບການປັບໃໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❷ສືບຕໍ່ຄົ້ນຄວ້າໂຄງສ້າງຂອງຮ່າງດຳລັດ ວ່າດ້ວຍການເຄື່ອນໄຫວວຽກງານຂໍ້ມູນສິນເຊື່ອ, ❸ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິ ບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❹ຄົ້ນຄວ້າການແຍກສູນຮັບຝາກຫຼັກຊັບ ອອກຈາກຕະຫຼາດຫຼັກຊັບລາວ;
- ສືບຕໍ່ສັງລວມຜົນການລົງກວດກາການກໍ່ສ້າງໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານ ປະຈຳປີ 2015;
- ສືບຕໍ່ປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015);
- ສືບຕໍ່ການຈັດຕັ້ງປະຕິບັດການປະເມີນຜົນການປະຕິບັດວຽກງານຂອງລັດຖະບານ ທຫລ ປະຈຳປີ 2015 ທີ່ ທຫລ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ພາສີ ພົມມະກອນ

---

[7]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.